# ໃບໂຄສະນາກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດທ"ພາສາລາວ"
(ດ້ານໜ້າ)

## ແຜນວາດຂັ້ນຕອນ,ການປະກອບເອກະສານ ແຈ້ງຂຶ້ນທະບຽນວິສາຫະກິດ.

ກ. ຜູ້ປະກອບການລົງທຶນຕ່າງປະເທດ:

ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນຈາກຂະແໜງແຜນການ ແລະການລົງທຶນ ຢູ່ຂັ້ນສູນກາງ ຫລື ທ້ອງຖິ່ນ "ທຈທ" ຂັ້ນ ນະຄອນຫລວງ ຫຼື ຂັ້ນແຂວງ ຈະຂຶ້ນທະບຽນວິສາຫະກິດ ພາຍໃນ 2 ວັນ.

**ເອກະສານປະກອບຄື:**

1. ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ
2. ໃບຮັບຮອງຊື່ວ/ກ
3. ໃບອະນຸຍາດລົງທຶນ,
4. ສັນຍາສ້າງຕັ້ງ.
5. ກົດລະບຽບຂອງວິສາຫະກິດ.
6. ໃບມອບສິດໃຫ້ມາພົວພັນ.




**ຂ. ຜູ້ປະກອບການທຸລະກິດພາຍໃນ:**

ບຸກຄົນ ຫຼື ນິຕິບຸກຄົນຢູ່ ສປປ ລາວ ສາມາດປະກອບເອກະສານແຈ້ງຂຶ້ນທະບຽນວິສາຫະກິດນຳ "ທຈທ" ຂັ້ນນະຄອນຫລວງ, ຂັ້ນແຂວງບ່ອນທີ່ວິສາຫະກິດຕັ້ງຢູ່ ຕາມການແບ່ງຂັ້ນຄວາມຮັບຜິດຊອບ ຫລື ຈະຜ່ານຜູ້ປະສານງານ "ທຈທ" ຂັ້ນເມືອງກໍ່ໄດ້.




**ສຳລັບເອກະສານປະກອບສ້າງຕັ້ງວິສາຫະກິດມີ:**

ກ. ວ/ກ ສ່ວນບຸກຄົນ ແລະ ບໍລິສັດ ຈຳກັດຜູ້ດຽວ

1. ໃບຮັບຮອງຊື່ວິສາຫະກິດ
2. ຄຳຮ້ອງແຈ້ງຂຶ້ນທະບຽນ ວ/ກ
3. ສັນຍາຈ້າງຜູ້ຈັດການ( ຖ້າມີ )
4. ໃບມອບສິດ, ຮູບ 3x4= 6ໃບ
5. ກົດລະບຽບ ( ສຳລັບ ບໍລິສັດ ຈຳກັດຜູ້ດຽວ )

ຂ. ວ/ກຮຸ້ນສ່ວນ,ບໍລິສັດ ລວມທັງ ບໍລິສັດລັດ ແລະ ບໍລິສັດປະສົມ

1. ໃບຮັບຮອງຊື່ວິສາຫະກິດ, ຄຳຮ້ອງ
2. ບົດບັນທຶກກອງປະຊຸມ,ສັນຍາສ້າງຕັ້ງ ວ/ກ, ສັນຍາຈ້າງຜູ້ຈັດ ການ ( ຖ້າມີ ), ກົດລະບຽບ
3. ໃບອະນຸມັດສ້າງຕັ້ງ( ບ/ສ ລັດ ຫລື ລັດປະສົມ )

- ໃບມອບສິດ, ຮູບ 3x4= 6ໃບ

ສ່ວນເອກະສານຄັດຕິດແມ່ນໄດ້ແນະນຳຢູ່ຕາມແຕ່ລະແບບຟອມຄຳຮ້ອງ.



## ການແຈ້ງຂຶ້ນທະບຽນວິສາຫະກິດ




"ທຈທ"ກວດກາຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຕາມປະເພດດຳເນີນທຸລະກິດ ຄື:

- ຖ້າບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ "ທຈທ" ຈະຂຶ້ນທະບຽນວິສາຫະກິດໃຫ້ສຳເລັດພາຍໃນ**ສິບວັນລັດຖະການ**.
- ຖ້າຢູ່ໃນບັນຊີປະເພດທຸລະກິດຄວບຄຸມ "ທຈທ" ຈະສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງໃນທັນໃດ. ເພື່ອປະກອບຄຳເຫັນໃນການສ້າງຕັ້ງວິສາຫະກິດພາຍໃນ10ວັນ.ຖ້າໄດ້ຮັບຄຳຕອບເຫັນດີ "ທຈທ" ຈະຂຶ້ນທະບຽນວິສາຫະກິດໃຫ້ສຳເລັດພາຍໃນສາມວັນ ລັດຖະການ.(ຖ້າບໍ່ເຫັນດີ "ທຈທ" ກໍ່ຈະຕອບໃຫ້ຜູ້ສະເໜີສ້າງຕັ້ງເປັນລາຍລັກອັກສອນ).

*** ສິດໃນການນຳໃຊ້ຊື່ວິສາຫະກິດ**

ພາຍຫຼັງໄດ້ໃບຮັບຮອງຊື່ຕ້ອງຂຶ້ນທະບຽນວິສາຫະທິດ ແລະ ຂຶ້ນທະບຽນອາກອນ,ຂໍໃບອະນຸຍາດດຳເນີນທຸລະກິດນຳຂະແໜງການກ່ຽວຂ້ອງ (ຖ້າມີ) ຊື່ວິສາຫະກິດຕ້ອງໃຫ້ຖືກຕ້ອງຕາມໃບຮັບຮອງຊື່ ແລະ ໃບທະບຽນວິສາຫະກິດ



## ການນຳໃຊ້ແລະການຄຸ້ມຄອງທະບຽນວິສາຫະກິດ

**ກ. ສຳລັບບັນດາຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດຜ່ານມາແລ້ວ (ຕາມກົດໝາຍວ່າດວັຍທຸລະກິດ)**

ຫົວໜ່ວຍທຸລະກິດການລົງທຶນພາຍໃນ ແລະ ຕ່າງປະເທດທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ, ໃຫ້ມາດັດແກ້ໃບທະບຽນວິສາຫະກິດຄືນໃໝ່ເພື່ອໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດສະບັບປັບປຸງ ແລະ ລະບຽບການກຳນົດໄວ້.

**ຂ. ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້ :**

- ຫົວໜ່ວຍວິສາຫະກິດຕ້ອງຂຶ້ນທະບຽນອາກອນ, ຂໍໃບອະນຸຍາດດຳເນີນທຸລະກິດ (ຖ້າຂະແໜງ ການກ່ຽວ ຂ້ອງກຳນົດ),
- ຕ້ອງເຄື່ອນໄຫວພາຍໃນ 90 ວັນນັບແຕ່ມື້ ໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ. ຖ້າບໍ່ເຄື່ອນໄຫວຕ້ອງມາແຈ້ງ ໃຫ້ ທຈທ ຊາບພາຍໃນ 10 ວັນລັດຖະການ
- ຕ້ອງຂຶ້ນປ້າຍວິສາຫະກິດຕິນໃຫ້ຖືກຕ້ອງຕາມຊື່, ຮູບ ການ, ຮູບແບບ ແລະ ເຄື່ອນໄຫວຕາມວັດຖຸປະສົງ ແລະ ກິດຈະການທີ່ໄດ້ຮັບອະນຸຍາດໃນໃບທະບຽນວິສາຫະກິດ. ( ກົດໝາຍກຳນົດໄວ້ໃນ ມຕ 16, 17 , 18, 20 ແລະ 240 )

**ຄ. ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວ ທີ່ບໍ່ສອດຄ່ອງຕາມລະບຽບກົດໝາຍ :**

- ຖ້າຫາກມີເຈົ້າໜ້າທີ່ຂອງ "ທຈທ" , " ທຈທ " ຫລື ຂະແໜງການກ່ຽວຂ້ອງໃດກົດໜ່ວງການຂຶ້ນທະບຽນວິສາຫະກິດ ຈະຖືກປະຕິບັດຕາມ ມາດ ຕາ 230,233, 234, 235 , 238 ແລະ 243.
- ຖ້າຫົວໜ່ວຍທຸລະກິດໃດ ເຄື່ອນໄຫວບໍ່ຖືກຕ້ອງ ຕາມລະບຽບ, ກົດໝາຍວິສາຫະກິດ ຈະໄດ້ຖືກປະຕິບັດຕາມ ມາດຕາ 236, 237, 238, 240, 241, 242 ແລະ 243 ຢ່າງເຂັ້ມງວດ.

ອອກແບບ ແລະ ຈັດພິມຄັ້ງທີ I ໂດຍ: ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ( ກົມການຄ້າພາຍໃນ), ທີ່ຢູ່: ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທ: 021 412001, ເຟັກ: 021 412011 www. Moc.gov.la, Email: ero@moc.gov.la






ອຸປະຖຳໂດຍ:

KOLAO

ໂຄລາວ ກຣຸບ

ຫ້ອງການໃຫຍ່: ຖະໜົນ ດົງປ່າລານ, ບ້ານ ໜອງຈັນ,ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ
ໂທ: 021 450560, ແຟັກ: 021 450561, www.kolao.net, yes@kolao.net

(ດ້ານຫຼັງ)

## ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດມີ:

### ທີ່ຕັ້ງ ແລະ ພາລະບົດບາດ

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດແມ່ນພາກສ່ວນໜຶ່ງໃນໂຄງປະກອບກົງຈັກຂອງກົມການຄ້າພາຍໃນແລະມີສາຍຕັ້ງຮອດແຂວງ, ນະຄອນຫຼວງ ແລະ ເມືອງຫຼືເທດສະບານ. ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຂຽນຫຍໍ້ເປັນພາສາລາວວ່າ "ທຈທ" ຂຽນເປັນພາສາສາກົນວ່າ: " Enterprise RegistryOffice"ຂຽນຫຍໍ້ວ່າ "ERO". ມີພາລະບົດບາດໃນການບໍລິການການຂຶ້ນທະບຽນວິສາຫະກິດ, ຕິດຕາມ ແລະ ເກັບກຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດຂອງຫົວໜ່ວຍທຸລະກິດ.

### ໜ້າທີ່

- ກວດສອບຊື່ ແລະ ກຳນົດລະຫັດ (Code) ຂອງວິສາຫະກິດ;
- ຮັບແຈ້ງສັນຍາສ້າງຕັ້ງຂອງວິສາຫະກິດຮຸ້ນສ່ວນ, ບໍລິສັດ;
- ຮັບຄຳຮ້ອງແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດ;
- ເປັນຖານຂໍ້ມູນຂອງວິສາຫະກິດ(National Database);
- ໃຫ້ບໍລິການຂໍ້ມູນກ່ຽວກັບທະບຽນວິສາຫະກິດ ແກ່ມວນຊົນ;
- ຕິດຕາມ, ເກັບກຳການປະຕິບັດກົດໝາຍວ່າດ້ວຍວິສາຫະກິດ. ເຜີຍແຜ່ ແລະ ຝຶກອົບຮົມລະບຽບການກ່ຽວກັບການຂຶ້ນທະບຽນວິສາຫະກິດ;
-ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

### ຂອບເຂດສິດ

- ຢັ້ງຢືນຊື່ວິສາຫະກິດທີ່ຈອງເບື້ອງຕົ້ນ;
- ເຊັນທະບຽນວິສາຫະກິດ;
- ຖອນທະບຽນວິສາຫະກິດຖາວອນຕາມກົດໝາຍວ່າດ້ວຍວິສາຫະກິດ;
- ເກັບ ແລະ ນຳໃຊ້ຄ່າທຳນຽມຈາກການບໍລິການຕາມລະບຽບກົດໝາຍ;
- ກວດກາການປະຕິບັດກົດໝາຍວ່າດ້ວຍວິສາຫະກິດຂອງຫົວໜ່ວຍທຸລະກິດ;
- ປະຕິບັດສິດອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບ ກົດໝາຍ.



## ການແຈ້ງຂຶ້ນທະບຽນວິສາຫະກິດ






## ສິ່ງທີ່ຄວນຮູ້ຂອງຜູ້ມີຈຸດປະສົງສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ.

ບຸກຄົນ ຫຼື ນິຕິບຸກຄົນໃດທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດເພື່ອເຄື່ອນໄຫວດຳເນີນທຸລະກິດຢູ່ ສປປ ລາວກ່ອນອື່ນໝົດຕ້ອງໄດ້ສຶກສາ ແລະ ທຳຄວາມເຂົ້າໃຈຄວາມໝາຍ, ຄວາມສຳຄັນຂອງກົດໝາຍວ່າດ້ວຍວິສາຫະກິດເປັນພື້ນຖານຕົ້ນຕໍ. ທຈທ ໄດ້ເຜີຍແຜ່ດ້ານນິຕິກຳ, ຮ່າງແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເປັນແຕ່ລະຮູບການ, ຮູບແບບ ຂອງການສະເໜີສ້າງຕັ້ງວິສາຫະກິດໄວ້ເປັນລະບົບຄົບຊຸດ, ຊຶ່ງຜູ້ປະກອບການສາມາດ ພົວພັນເອົາໄດ້ດ້ວຍ 2 ວິທີຄື:

1./ ພົວພັນຊື້ເອົາຟອມຄຳຮ້ອງ ແລະ ນິຕິກຳ ຢູ່ນຳ "ທຈທ" ຢູ່ຂັ້ນນະຄອນຫຼວງຕັ້ງຢູ່ກົມການຄ້າພາຍໃນ(ກະຊວງອຸດສາຫະກຳແລະການ ຄ້າ ຫຼື ບັນດາ"ທຈທ" ຢູ່ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງທົ່ວປະເທດ, ດ້ວຍ 2 ລັກສະນະຄື:
- ຈັດພິມຈຳໜ່າຍເປັນຊຸດແບບຟອມຄຳຮ້ອງແລ້ວປະທັບກາແດງຂອງ ທຈທ ໃສ່ເຈ້ຍແບບຟອມແຕ່ລະໃບ
- ຈັດພິມຈຳໜ່າຍໂດຍກອັບປີ້ໃສ່ແຜ່ນຊີດີເປັນລະບົບຄົບຊຸດລວມມີແບບຟອມ, ນິຕິກຳກ່ຽວກັບການຂຶ້ນທະບຽນວິສາຫະກິດ ແລະ ບັນດາກົດໝາຍ ແລະ ນິຕິກຳໂຂງເຂດເສດຖະກິດ ແລະ ຍຸດຕິທຳ ຊຶ່ງລວມມີ 62 ສະບັບ. ຜູ້ສົນໃຈສາມາດພົວພັນກັບ" ທຈທ" ຈະໄດ້ຮັບການອະທິບາຍລະອຽດເພີ່ມເຕີມ .

2./ ສາມາດໂລດເອົາແບບຟອມ, ຂໍ້ມູນນິຕິກຳກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດຕາມເວບໄຊ້ www.moc.gov.la ຫຼືພົວພັນກັບ"ທຈທ" ຕາມທີ່ຢູ່: Email: ero@moc.gov.la.

ລາຄາແບບຟອມແຈ້ງຂຶ້ນທະບຽນວິສາຫະກິດ

1. ໃບສະເໜີຂໍຈອງຊື່ວິສາຫະກິດ10.000ກີບ/ຊຸດ.
2. ສັນຍາສ້າງຕັ້ງ10.000ກີບ/ຊຸດ.
3. ຄຳຮ້ອງ (ສຳລັບວິສາຫະກິດສ່ວນບຸກຄົນ 30.000ກີບ/ຊຸດ)
4. ຄຳຮ້ອງ ແລະ ກົດລະບຽບວິສາຫະກິດຮຸ້ນ ແລະ ບໍລິສັດ (ລວມທັງບໍລິສັດລັດ ແລະ ບໍລິສັດປະສົມ 70.000ກີບ/ຊຸດ).

ທຸກແບບຟອມຈະໄດ້ມາໃນຮູບການໃດກໍ່ຕາມຖ້າບໍ່ມີກາແດງປະທັບ ແລະ ໃບຮັບເງິນ"ທຈທ"ຈະເກັບຄ່າທຳນຽມຕາມລະບຽບການ ໃນເວລາແຈ້ງຂຶ້ນທະບຽນວິສາຫະກິດ.



## ການຈອງຊື່ວິສາຫະກິດ

### ກ. ການໃສ່ຊື່ວິສາຫະກິດ

ການຕັ້ງຊື່ວິສາຫະກິດຈະກຳນົດໃຫ້ມີຄວາມໝາຍ, ເນື້ອໃນທີ່ມີລັກສະນະຊື່ບໍ່ຄຸມເຄືອ, ຄ້າຍຄື, ຊ້ຳກັນກັບຊື່ວິສາຫະກິດອື່ນໃນຂອບເຂດນະຄອນຫຼວງ, ແຂວງດຽວກັນ, ຂັດກັບວັດທະນາທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຊື່ຂອງປະເທດ, ອົງການຈັດຕັ້ງສາກົນ,ຊື່ ແລະ ເອກະລັກດ້ານວັດທະນາທຳ ຫຼື ປູລະນິຍະສະຖານຂອງຊາດ, ນາມສະກຸນຜູ້ໜຶ່ງ ຫຼື ຫຼາຍຄົນກໍ່ໄດ້ ແຕ່ຊື່ວິສາຫະກິດຕ້ອງມີ ຮູບການ,ຮູບແບບຕິດນຳທຸກຄັ້ງ ແລະ ຜູ້ທີ່ຈອງຊື່ວິສາຫະກິດກ່ອນມີບູລິມະສິດໃນຊື່ວິສາຫະກິດນັ້ນ.

### ຂ. ການຈອງຊື່ວິສາຫະກິດ

ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດຢູ່ ສປປລາວ ຕ້ອງໄດ້ສະເໜີຈອງຊື່ວິສາຫະກິດຂອງຕົນນຳ "ທຈທ"ນະຄອນຫຼວງບ່ອນດຽວ ເພື່ອອອກໃບຮັບຮອງຊື່ ແລະ ໃບອະນຸມັດຈອງຊື່ວິສາຫະກິດ ຫຼືສະເໜີຜ່ານ"ທຈທ" ຂັ້ນແຂວງບ່ອນທີ່ວິສາຫະກິດຕັ້ງຢູ່ ແຕ່ກ່ອນຈະອອກໃບຮັບຮອງຊື່ ຈະຕ້ອງໄດ້ຮັບອະນຸມັດຈອງຊື່ວິສາຫະກິດກ່ອນ.

*** ແຜນວາດການສະເໜີຈອງຊື່,**




* <u>ສຳລັບເອກະສານປະກອບຄື:</u>

ກ. ວິສາຫະກິດສ່ວນບຸກຄົນ ແລະ ບໍລິສັດຈຳກັດຜູ້ດຽວ
- ໃບສະເໜີຈອງຊື່ ແລະ ໃບມອບສິດ.

ຂ. ວິສາຫະກິດຮຸ້ນສ່ວນ, ບໍລິສັດຈຳກັດ, ບໍລິສັດລັດ ແລະ ບໍລິສັດປະສົມ
- ໃບສະເໜີຈອງຊື່, ສັນຍາສ້າງຕັ້ງ ແລະ ໃບມອບສິດ.

ໃບໂຄສະນາກ່ຽວກັບການແຈ້ງຂື້ນທະບຽນວິສາຫະກິດທ”ພາສາອັງກິດ“

(ດ້ານໜ້າ)

## Diagram on procedures and documents for enterprise registration

### A. Foreign entrepreneur:

Upon obtaining investment license from the Planning and Investment authority at either central or local level, the Enterprise Registry Office "ERO" at Vientiane Capital or provinces shall register such enterprise within 2 days.

Required documents include:

1. Application Form for Registration,
2. Enterprise's name certificate,
3. Investment license,
4. Articles of Association,
5. Enterprise's Bylaws,
6. Letter of Attorney.




### B. Domestic entrepreneur:

A person or legal entity in Lao PDR may submit documents to apply for enterprise registration from the "ERO" at Vientiane Capital, provinces or through a coordinator of "ERO" at the district where the enterprise locates.




**Required documents for establishing enterprise include:**

**A.Individual enterprise and sole limited company**

1.Enterprise's name certificate
2.Application form for enterprise registration
3.Manager's employment contract (if any)
4.Letter of Attorney, 6 Photos (size 3x4).
5.Bylaws (for sole limited company)

**B.Partnership enterprise, company, including state company, and mixed company**

1.Enterprise's name certificate, application
2.Minutes of meeting, Articles of Association, manager's employment contract (if any), Bylaws
3.Decision Letter for enterprise establishment (state or state-mixed company)
4.Letter of Attorney, 6 Photos (size 3x4).

**For attached documents, they are prescribed in each application form**



## Enterprise registration




"ERO" verifies the enterprise registration application dossier according to the type of business activities such as:

•If not included in the negative list, the "ERO" shall complete registration process within ten working days.

•If included in the negative list, the "ERO" shall immediately forward [application dossier] to relevant agencies for comments on enterprise registration within ten days. If approved, the "ERO" shall complete the enterprise registration within ***three working days***. (if not approved, the "ERO" shall respond to the applicant in written form).

**Rights in using enterprise's name After obtaining enterprise's name certificate, the enterprise shall seek enterprise and tax registration, seek licenses from relevant agencies (if applicable); enterprise's name shall be in accordance with the enterprise's name certificate and enterprise certificate.**



## Use and administration of enterprise registration

**A.Enterprise unit that has already been registered (under the Business Law, the former law)**

Both domestic and foreign business units that are registered [under the Business Law] shall apply for amendment of the certificate in accordance with the new Enterprise Law and other related regulations.

**B.Enterprises registered under the Enterprise Law shall meet the following requirements:**

•Enterprise shall register its taxes, obtain operating license (if required by relevant authority),
•Shall operate within 90 days from the date of enterprise registration. If the enterprise is no longer in operation, it shall notify to the ERO not less than 10 working days prior to the closing date.
•Shall post a sign indicating its name, form, kind and operate according to its objective and activities as provided in the enterprise registration certificate.
(Art. 16, 17, 18, 20 and 240 of the Enterprise Law)

**C.Implementation and operation not according to laws and regulations:**

•If any officials from the "ERO" or relevant agencies pose impediment to enterprise registration process, they shall be punished pursuant to Art. 230, 233, 234, 235, 238 and 243 in Enterprise Law.
•If the enterprise fails to operate according to relevant rules and the Enterprise Law, they shall be strictly punished pursuant to Art. 236, 237, 238, 240, 241, 242 and 243.

Designed and Printed as the 1st Edition by:
Enterprise Registration Office (Internal Trade Department)
Address: Ban Phonexay, Saysettha, Vientiane Capital
Tel: 021 412001; Fax: 021 412011
Website: www.moc.gov.la; E-mail: ero@moc.gov.la






Support By:

KOLAO GROUP

Head Office: Dongpalane Rd, Nongchan Village, Sisattanak District, Vientiane, Lao PDR
Tel: +856 21 450560, ແຟັກ:+856 21 450561, www.kolao.net, yes@kolao.net

## Enterprise Registry Office: Location and roles

The Enterprise Registry Office is part of the Internal Trade Department and has vertical line to provinces, Vientiane capital and districts or municipality. The Enterprise Registry Office is abbreviated in Lao as: "ທຈທ", in English as "ERO".

Its roles are to provide services for enterprise registration, monitor and record the business unit's compliance withf the Enterprise Law.

### Duties

- check enterprise's name and determine code of the enterprise;
- accept Articles of Association from partnership enterprise, company;
- accept application dossier for registration and amendment of enterprise certificate;
- maintain National Database of enterprises;
- provide data on enterprise registration to the public;
- monitor, record the implementation of the Enterprise Law. Disseminate and provide training on procedures for enterprise registration;
- carry out other duties as provided for in relevant laws and regulations;

### Rights

- certify enterprise's name as being reserved;
- sign enterprise certificate;
- withdraw enterprise certificate permanently in accordance with the Enterprise Law;
- collect and use service fees in accordance with laws;
- inspect compliance with the Enterprise Law by enterprises;
- perform other rights as provided for in relevant laws and regulations.



## Enterprise Registration System






## Things to know for those wishing to establish an enterprise in Lao PDR

Any person or legal entity wishing to establish an enterprise to operate in Lao PDR shall firstly study and understand the meaning, and the importance of the Enterprise Law.

The ERO has disseminated related regulations, application forms for enterprise registration for each form and kind of enterprise in a complete and systemic manner, by which the entrepreneur may obtain in two ways:

1./ buy the application forms and related regulations from the "ERO" at central level at the Internal Trade Department (Ministry of Industry and Commerce) or the "ERO" at the provincial industry and commerce offices nationwide, through two types:
- hard copy of applications form printed with red seal of the ERO on each page
- distributed in the form of CD which contains documents including application forms, related regulations on enterprise registration, and 62 laws and regulations in economic domain and others. Interested persons may contact the "ERO" and consult for further information.

2./ download application form and related regulations on enterprise registration from the website www.moc.gov.la or contact the "ERO" at: Email: ero@moc.gov.la

### Fees for enterprise registration application

1. Application for reserving enterprise's name 10.000kip/set.
2. Form of Articles of Association 10.000 kip/set.
3. Relevant Application Forms (for individual enterprise 30.000 kip/set)
4. Application and Bylaws Form of partnership enterprise and company (including state and mixed company 70.000 kip/set).

**All application forms obtained from any source without red seal and receipt from "ERO", fees shall be collected in accordance with regulations at the time of enterprise registration.**



## Reserving enterprise's name

### A. Naming an enterprise

Naming of an enterprise should not be ambiguous, similar or duplicated to other enterprise's name within Vientiane Capital or the same province and the name shall not contradict to national culture, traditions, and public order, name of country, international organization, name and identity of culture or historic sites; the name may follow first or family name of one or many people; enterprise's name shall be accompanied with form and kind every time and the person who first reserves enterprise's name shall have priority in such name.

### B. Reserving enterprise's name

A person or legal entity wishing to establish an enterprise in Lao PDR shall apply for the enterprise's name registration with the "ERO" at Vientiane Capital only, in order to obtain the permit for name reservation and name certificate. Or applicant may proceed through the "ERO" at the province where the enterprise locates, but name reservation permit is required before name certificate can be issued.

**❖Diagram on applying for reserving enterprise's name**




**❖Required documents:**

*A. Individual enterprise or sole limited company*
Application form for reserving name and a letter of attorney

*B. Partnership enterprise, company limited, state company and mixed company*
Application form for name reservation, Articles of Association, and Letter of Attorney.